ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ

ເລກທີ 210/ກຍ

ນະຄອນຫຼວງວຽງຈັນ, ວັນທີ 19 OCT 2009

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງຍຸຕິທຳ

## ວ່າດ້ວຍການສ້າງຕັ້ງ ແລະການເຄື່ອນໄຫວຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 404/ນຍ, ລົງວັນທີ 23 ພະຈິກ 2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງຍຸຕິທຳ;
- ອີງຕາມສະພາບການຈັດຕັ້ງປະຕິບັດຕົວຈິງຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ສະບັບເລກທີ 02/ກຍ, ລົງວັນທີ 19 ມີນາ 2007 ວ່າດ້ວຍການສ້າງຕັ້ງ ແລະການເຄື່ອນໄຫວຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ;
- ອີງຕາມການຄົ້ນຄ້ວາ ແລະການສະເໜີຂອງກົມຄຸ້ມຄອງລະບົບຍຸຕິທຳ.

## ລັດຖະມົນຕີວ່າການ ຕົກລົງ

## ໝວດທີ I

## ຂໍ້ກຳນົດລວມກ່ຽວກັບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

### ມາດຕາ 1. ຈຸດປະສົງການສ້າງຕັ້ງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ການສ້າງຕັ້ງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນແນໃສ່ເຮັດໃຫ້ຮາກຖານບ້ານມີລະບົບການຈັດຕັ້ງຍຸຕິທຳ ເພື່ອຊ່ວຍແກ້ໄຂຂໍ້ຂັດແຍ່ງຕ່າງໆທີ່ເກີດຂຶ້ນພາຍໃນບ້ານດ້ວຍການປະນີປະນອມໂດຍສັນຕິວິທີ, ເຮັດໜ້າທີ່ຊ່ວຍອົງການປົກຄອງບ້ານໃນການສຶກສາອົບຮົມປະຊາຊົນ ເພື່ອສ້າງສະຕິເຄົາລົບ ແລະປະຕິບັດກົດໝາຍ, ກົດລະບຽບຂອງບ້ານ, ຮັບປະກັນຄວາມສະເໜີພາບບົນພື້ນຖານລະບຽບກົດໝາຍ. ປົກປ້ອງ ແລະເສີມຂະຫຍາຍຄວາມສາມັກຄີປອງດອງພາຍໃນຄອບຄົວ ແລະປະຊາຊົນບັນດາເຜົ່າພາຍໃນບ້ານ, ປະກອບສ່ວນສ້າງບ້ານໃຫ້ເປັນບ້ານພັດທະນາຢ່າງຮອບດ້ານ.